ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

2806

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ — ເລກທີ: 2806/ກຊສ

ນະຄອນຫຼວງວຽງຈັນ, ວັນທີ: 30 ພຶດສະພາ 2016.

# ຄຳສັ່ງແນະນຳ

**ຮຽນ: ທ່ານ ຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມແຂວງ, ນະຄອນຫຼວງວຽງຈັນ, ທ່ານ ຫ້ອງການຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມເມືອງ ໃນຂອບເຂດທົ່ວປະເທດ.**

**ເລື່ອງ: ການເພີ່ມທະວີ ຄວາມເອົາໃຈໃສ່ໃນການຈັດຕັ້ງປະຕິບັດ ວຽກງານການຄຸ້ມຄອງສັດນ້ຳ ແລະສັດປ່າໃນຂອບເຂດທົ່ວປະເທດ.**

- ອີງຕາມ ກົດໝາຍ ວ່າດ້ວຍ ສັດນ້ຳ ແລະສັດປ່າ ສະບັບເລກທີ 07/ສພຊ, ລົງວັນທີ 24/12/2007 ທີ່ໄດ້ກຳນົດໄວ້ໃນມາດຕາ 64 ພາກທີ VII.
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 435/ນຍ, ລົງວັນທີ 28 ພະຈິກ2011 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ.

ໃນຊຸມປີທີ່ຜ່ານມາເຫັນວ່າມີຫຼາຍທ້ອງຖິ່ນໄດ້ເອົາໃຈໃສ່ໃນການຄຸ້ມຄອງສັດນ້ຳ ແລະສັດປ່າ ໃນທ້ອງຖິ່ນຂອງຕົນຢ່າງຕັ້ງໜ້າ ໂດຍມີການກວດກາລາດຕະເວນຢູ່ໃນຂອບເຂດພື້ນທີ່ປ່າສະຫງວນ ແລະປ່າປ້ອງກັນ ແຫ່ງຊາດ,ເຂດທີ່ຫຼໍ່ແຫຼມ, ຕາມທ້ອງຕະລາດ ແລະຮ້ານອາຫານ, ພ້ອມດຽວກັນນັ້ນກໍ່ໄດ້ມີການໂຄສະນາເຜີຍແຜ່ໂດຍການອອກລະບຽບ ແລະມີມາດຕະການຫ້າມລ່າ ແລະຫ້າມຈັບໃນຊ່ວງ ໄລຍະສັດປ່າ ແລະສັດນ້ຳ ຖືພາມານ, ອອກແມ່ແຜ່ລູກ ແລະສະກັດກັ້ນການຄ້າຂາຍສັດນ້ຳ ແລະສັດປ່າ ທີ່ຜິດກົດໝາຍ. ປຸກລະດົມການມອບອາວຸດລ່າເນື້ອ ແລະເຄື່ອງມືຫາປາແບບດັບສູນໃຫ້ອຳນາດການປົກຄອງ ເພື່ອຄຸ້ມຄອງ ແລະນຳໃຊ້ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ວ່າດ້ວຍ ສັດນ້ຳ ແລະສັດປ່າ.

ໄປຄຽງຄູ່ກັບດ້ານຕັ້ງໜ້າຍັງສັງເກດເຫັນວ່າ ຢູ່ບາງທ້ອງຖິ່ນຍັງມີປະກົດການລະເມີດຕໍ່ກົດໝາຍ ໂດຍມີການຄ້າຂາຍສັດນ້ຳ ແລະສັດປ່າ ທີ່ຫວງຫ້າມຢູ່ຕາມທ້ອງຕະຫຼາດ ແລະຕາມເສັ້ນທາງຕ່າງໆ ແລະຍັງມີການລັກລອບລ່າສັດນ້ຳ ແລະສັດປ່າ, ການຫາປາດ້ວຍວິທີການນຳໃຊ້ອາວຸດສົງຄາມ, ລູກລະເບີດ, ຢາເບື່ອ, ທາດເຄມີ, ເຄື່ອງສອດປາ ແລະອື່ນໆ ບາງທ້ອງຖິ່ນຍັງມີປະກົດການລັກລອບຍິງຊ້າງປ່າ, ຄ້າຂາຍສັດນ້ຳ ແລະສັດປ່າ ປະເພດຫວງຫ້າມ (ບັນຊີ I) ແລະ ປະເພດຄຸ້ມຄອງ (ບັນຊີ II) ຢູ່ຕາມທ້ອງຕະຫຼາດ ແລະບັນດາຮ້ານອາຫານ ຢ່າງທ້າທາຍ ໂດຍບໍ່ຄຳນຶງເຖິງລະບຽບກົດໝາຍ.

ປະກົດການຫຍໍ້ທໍ້ທີ່ກ່າວມາຂ້າງເທິງນັ້ນ ແມ່ນການກະທຳທີ່ຜິດຕໍ່ກົດໝາຍ ແລະລະບຽບການຕ່າງໆ ທີ່ລັດໄດ້ປະກາດໃຊ້, ຝືນຕໍ່ສົນທິສັນຍາສາກົນ ທີ່ສປປ ລາວ ເປັນພາຄີ ແລະທັງເປັນໄພຂົ່ມຂູ່ຕໍ່ການຂະຫຍາຍພັນ ແລະຄວາມຢູ່ລອດຂອງສັດນ້ຳ ແລະສັດປ່າ ຂອງປະເທດເຮົາ.

ສະນັ້ນ, ເພື່ອແກ້ໄຂສິ່ງຫຍໍ້ທໍ້ດັ່ງກ່າວໃຫ້ເຂົ້າສູ່ລະບຽບກົດໝາຍ, ເປັນການສ້າງຂະບວນການຢ່າງຕັ້ງໜ້າ ເນື່ອງໃນວັນປ່ອຍປາ ແລະອະນຸລັກສັດນ້ຳ ແລະສັດປ່າແຫ່ງຊາດ 13 ກໍລະກົດ 2016 ແລະເປັນການສ້າງເງື່ອນໄຂ ໃຫ້ແກ່ການຂະຫຍາຍພັນຂອງສັດນ້ຳ ແລະສັດປ່າ.

## ລັດຖະມົນຕີ ອອກຄຳສັ່ງແນະນຳ:

ມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມເມືອງ ປະສານສົມທົບກັບການນຳອົງການປົກຄອງທ້ອງຖິ່ນ ແລະພາກສ່ວນກ່ຽວຂ້ອງຈັດຕັ້ງປະຕິບັດວຽກງານການຄຸ້ມຄອງສັດນ້ຳ ແລະສັດປ່າໃນຂອບເຂດທົ່ວປະເທດ ດັ່ງນີ້:

1) ສະເໜີໃຫ້ອົງການປົກຄອງທ້ອງຖິ່ນຈັດຕັ້ງເຜີຍແຜ່ ແລະຄົ້ນຄວ້າເຊື່ອມຊຶມເນື້ອໃນຕົ້ນຕໍ ຂອງກົດໝາຍວ່າດ້ວຍສັດນ້ຳ ແລະສັດປ່າ ດ້ວຍຫຼາຍຮູບການໃຫ້ແກ່ພະນັກງານ, ທະຫານ, ຕຳຫຼວດ, ພໍ່ຄ້າແມ່ຄ້າ, ເຈົ້າຂອງຮ້ານອາຫານ ແລະປະຊາຊົນບັນດາເຜົ່າ ໃຫ້ເປັນຂະບວນການກວ້າງຂວາງ ແລະທົ່ວເຖິງ;

2) ໂຄສະນາເຜີຍແຜ່, ປຸກລະດົມຂົນຂວາຍໃຫ້ທົ່ວສັງຄົມເຫັນໄດ້ຄວາມສຳຄັນຂອງສັດນ້ຳ ແລະສັດປ່າ ຕໍ່ສິ່ງແວດລ້ອມໃນທຳມະຊາດ, ຕໍ່ຊີວິດການເປັນຢູ່ຂອງຄົນເຮົາ ແລະເຫັນໄດ້ເຖິງສະພາບການຫຼຸດໜ້ອຍຖອຍລົງຂອງສັດນ້ຳ ແລະສັດປ່າໃນປະເທດເຮົາ ບໍ່ວ່າທາງດ້ານຈຳນວນ ແລະຊະນິດພັນ ໂດຍຜ່ານສື່ສານຕ່າງໆ ເຊັ່ນ: ໜັງສືພິມ, ວິທະຍຸກະຈາຍສຽງ ແລະ ໂທລະພາບ, ບົດກາບກອນ, ບົດເພງ, ບົດລຳ, ບົດເລື່ອງສັ້ນ ພ້ອມກັນນັ້ນຢູ່ໃນບ່ອນທີ່ມີເງື່ອນໄຂ ກໍ່ຄວນມີການຈັດປະກວດຮູບແຕ້ມ, ການຈັດວາງສະແດງ ແລະຄັດເລືອກບຸກຄົນດີເດັ່ນ ຕໍ່ການອະນຸລັກສັດນ້ຳ ແລະສັດປ່າ, ແຈກຢາຍຄູ່ມື ແລະເອກະສານວິຊາການ ການຂະຫຍາຍພັນປາ ແລະວຽກງານອະນຸລັກສັດນ້ຳ ແລະສັດປ່າ ເພື່ອເປັນຄວາມຮູ້ພື້ນຖານ ໃນການອະນຸລັກສັດນ້ຳ ແລະສັດປ່າທຳມະຊາດ ຢ່າງທົ່ວເຖິງ;

3) ເຮັດໃບແຈ້ງການເຖິງບັນດາຜູ້ປະກອບການ ທີ່ດຳເນີນທຸລະກິດກ່ຽວກັບສັດນ້ຳ ແລະສັດປ່າໃຫ້ປະຕິບັດຕາມກົດໝາຍວ່າດ້ວຍສັດນ້ຳ ແລະສັດປ່າ ຢູ່ໃນພາກທີ IV ການນຳໃຊ້ສັດນ້ຳ ແລະສັດປ່າ, ໝວດທີ 2 ທຸລະກິດກ່ຽວກັບສັດນ້ຳ ແລະສັດປ່າ ໃນມາດຕາ 35, 37 ແລະ 38. ພ້ອມທັງ ເອົາໃຈໃສ່ໃນການເກັບກຳຂໍ້ມູນ, ການຂຶ້ນທະບຽນສັດນ້ຳ ແລະສັດປ່າ ທີ່ນຳມາລ້ຽງ ລວມທັງການມີງາຊ້າງໄວ້ຄອບຄອງ ໃນແຕ່ລະບ້ານ, ເມືອງ ແລະ ແຂວງຂອງຕົນ;

4) ດຳເນີນການຕິດຕາມກວດກາ ແລະສືບຕໍ່ປຸກລະດົມຂົນຂວາຍປະຊາຊົນ ໃຫ້ຕື່ນຕົວສະໝັກໃຈເປັນແບບຢ່າງໃນການມອບອາວຸດລ່າສັດ ແລະເຄື່ອງມືຫາປາແບບດັບສູນ ໃຫ້ແກ່ອົງການປົກຄອງທ້ອງຖິ່ນ ແລະເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງໃຫ້ຖືກຕ້ອງຕາມລະບຽບກົດໝາຍ;

5) ສົມທົບກັບອົງການປົກຄອງທ້ອງຖິ່ນ ປຸກລະດົມ ແລະຈັດຕັ້ງຂະບວນການປ່ອຍປາຊະນິດພື້ນເມືອງຕ່າງໆ ໃຫ້ໄດ້ຢ່າງກວ້າງຂວາງລົງໃນໜອງ, ບຶງ, ແມ່ນ້ຳລຳເຊ, ອ່າງເກັບນ້ຳ ເຊັ່ນ: ອ່າງເກັບນ້ຳຊົນລະປະທານ, ເຂື່ອນໄຟຟ້ານ້ຳຕົກ ແລະປ່ອຍສັດປ່າຊະນິດຕ່າງໆ ທີ່ໄດ້ມາຈາກການເພາະພັນເຂົ້າໃນປ່າສະຫງວນຕ່າງໆ ທີ່ເຫັນວ່າມີຄວາມປອດໄພ ແລະສາມາດອອກແມ່ແຜ່ລູກໄດ້;

6) ຫ້າມຈັບ, ຊື້-ຂາຍ, ຫາສັດນ້ຳ ແລະສັດປ່າ ປະເພດຫວງຫ້າມທີ່ໄດ້ລະບຸໄວ້ໃນ (ບັນຊີ I) ແລະປະເພດຄຸ້ມຄອງ (ບັນຊີ II) ໃນທຸກລະດູການຢ່າງເດັດຂາດ (ລາຍລະອຽດ ບັນຊີ I ແລະບັນຊີ II ມີໃນເອກະສານຊ້ອນທ້າຍ ຂອງຄຳສັ່ງແນະນຳສະບັບນີ້);

- ຫ້າມນຳເອົາສັດນ້ຳ ແລະສັດປ່າ ປະເພດຫວງຫ້າມ ທີ່ຍັງມີຊີວິດ, ງາຊ້າງ, ຊາກ, ສິ້ນສ່ວນ ແລະ ອະໄວຍະວະຕ່າງໆຂອງສັດ ອອກຈາກຖິ່ນທີ່ຢູ່ອາໄສ ຫຼື ແຫຼ່ງກຳເນີດ ມາໄວ້ຄອບຄອງ;
- ຫ້າມລ່າສັດນ້ຳ ແລະສັດປ່າ ປະເພດທົ່ວໄປ (ບັນຊີ III) ໃນສະຖານທີ່ ທີ່ຫວງຫ້າມ, ເຂດອະນຸລັກພັນສັດປ່າ ແລະວັງສະຫງວນ ໂດຍສະເພາະແມ່ນໃນໄລຍະເຂົ້າພັນສາ;
- ຫ້າມບຸກລຸກທຳລາຍ ເຂດອະນຸລັກພັນສັດປ່າ, ວັງສະຫງວນພັນປາ, ຖິ່ນທີ່ຢູ່ອາໄສ ແລະ ແຫຼ່ງອາຫານຂອງສັດນ້ຳ ແລະສັດປ່າ ໂດຍທາງກົງ ແລະທາງອ້ອມ ເຊັ່ນ: ດ້ວຍການບຸກເບີກ, ຕັ້ງຖິ່ນຖານໃໝ່, ຖາກຖາງປ່າໄມ້, ຈູດປ່າ, ຕັດໄມ້, ນຳໃຊ້ຢາປາບສັດຕູພືດ ແລະຢາຂ້າຫຍ້າເກີນກຳນົດ ແລະການກະທຳອື່ນໆ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ;
- ຫ້າມຈັບຈອງ, ຍ້າຍ, ປ່ຽນແປງ ຫຼື ທຳລາຍ ເຄື່ອງໝາຍເຂດແດນ ວັງສະຫງວນ, ເຂດອະນຸລັກພັນສັດ ແລະຖິ່ນທີ່ຢູ່ອາໄສຂອງສັດປ່າ ແລະສັດນ້ຳທຳມະຊາດ.

7) ຫ້າມບັນດາຫ້າງຮ້ານ, ຕະຫຼາດ, ສູນການຄ້າ, ໂຮງແຮມ ຫຼື ສະຖານທີ່ອື່ນໆ ວາງຂາຍ, ວາງສະແດງ ແລະ ພົວພັນຊື້-ຂາຍສັດນ້ຳ-ສັດປ່າປະເພດຫວງຫ້າມ ທັງມີຊີວິດ ແລະ ບໍ່ມີຊີວິດ, ສິ້ນສ່ວນ ຫຼື ອາໄວຍະວະຂອງສັດນ້ຳ-ສັດປ່າ ທີ່ນອນຢູ່ໃນບັນຊີ I ແລະບັນຊີ II ຢ່າງເດັດຂາດ;

8) ຫ້າມບັນດາຮ້ານອາຫານ ໃຫ້ບໍລິການອາຫານທີ່ປຸງແຕ່ງຈາກສັດນ້ຳ-ສັດປ່າປະເພດຫວງຫ້າມ ທີ່ນອນຢູ່ໃນບັນຊີ I ແລະບັນຊີ II ຢ່າງເດັດຂາດ. ໃນນີ້ລວມທັງການຫ້າມໂຄສະນາ, ປຸກລະດົມ ແລະຊວນເຊື່ອໃຫ້ສັງຄົມຊົມໃຊ້ ແລະບໍລິໂພກ;

9) ໃຫ້ດຳເນີນມາດຕະການເກືອດຫ້າມການຫາປາ ໃນຊ່ວງລະດູປາວາງໄຂ່ ນັບແຕ່ວັນທີ 01 ພຶດສະພາ ຫາວັນທີ 31 ຕຸລາ ຂອງທຸກປີ ເພາະໃນຊ່ວງນີ້ ເປັນຊ່ວງໄລຍະທີ່ສັດນ້ຳ ແລະສັດປ່າຊະນິດຕ່າງໆ ກຳລັງຖືພາມານ ແລະອອກແມ່ແຜ່ລູກ ໃນໄລຍະນີ້ ແມ່ນຫ້າມເດັດຂາດ ບໍ່ໃຫ້ມີການລ່າສັດທຸກປະເພດ, ພ້ອມດຽວກັນນັ້ນກໍ່ໃຫ້ຈັດຕັ້ງພະນັກງານລົງຕິດຕາມກວດກາເປັນແຕ່ລະໄລຍະ ຢູ່ຕາມເຂດປາຂຶ້ນວາງໄຂ່ ເປັນຕົ້ນແມ່ນຢູ່ຕາມວັງສະຫງວນພັນປາ, ຫ້າມຕັນທາງເດີນຂອງປາ ຂຶ້ນວາງໄຂ່ຕາມຫ້ວຍ ແລະ ສາຍນ້ຳດ້ວຍວິທີການເຮັດຕ້ອນ, ເຮັດລີ່, ໃສ່ລອບ ຫຼື ໂຕ່ງ, ມອງຕາຖີ່ ແລະຫ້າມເດັດຂາດການນຳໃຊ້ລະເບີດ, ທາດເຄມີເບື່ອປາ, ເຄື່ອງສອດປາ ແລະເຄື່ອງມືຫາປາ ທີ່ມີລັກສະນະດັບສູນ;

10) ໃຫ້ສ້າງແຜນການ ແລະປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະແມ່ນອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ໃນການຈັດຕັ້ງພິທີສະເຫຼີມສະຫຼອງວັນປ່ອຍປາ ແລະອະນຸລັກສັດນ້ຳ ແລະສັດປ່າແຫ່ງຊາດ 13 ກໍລະກົດ ຢ່າງມີເນື້ອໃນ ໃຫ້ກາຍມາເປັນປະເພນີ ອັນດີງາມຂອງຊາດ (ດັ່ງຄຳຂວັນລຸ່ມນີ້):

- ຊົມເຊີຍວັນປ່ອຍປາ ແລະອະນຸລັກສັດນ້ຳ ແລະສັດປ່າແຫ່ງຊາດ ວັນທີ13 ກໍລະກົດ2016.
- ການປົກປັກຮັກສາສັດນ້ຳ ແລະສັດປ່າ ແມ່ນພັນທະ ແລະໜ້າທີ່ຂອງປວງຊົນລາວ ທັງຊາດ.
- ຈົ່ງຊ່ວຍກັນປົກປັກຮັກສາປ່າໄມ້, ສັດນ້ຳ ແລະສັດປ່າ ໃຫ້ອຸດົມສົມບູນຕະຫຼອດໄປ.

11) ມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ ແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ ເມືອງ ໃນຂອບເຂດທົ່ວປະເທດ ເປັນເຈົ້າການໃນການເປີດບັ້ນເຊື່ອມຊຶມ ຈັດຕັ້ງປະຕິບັດຄຳສັ່ງແນະນຳ ສະບັບນີ້ຢ່າງເຂັ້ມງວດ;

12) ຄຳສັ່ງແນະນຳ ສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ສົມມາດ ພົລເສນາ

**ສຳເນົາ ແລະ ບຳລຸງ:**

- ຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ (ເພື່ອລາຍງານ)
- ກະຊວງຖະແຫຼງຂ່າວ ແລະ ວັດທະນາທຳ (ໜັງສືພິມ, ວິທະຍຸ, ໂທລະພາບ) (ເພື່ອອອກຂ່າວ ແລະ ໂຄສະນາ)
- ຫ້ອງວ່າການ ປົກຄອງແຂວງ ແລະ ນະຄອນຫຼວງວຽງຈັນ ໃນທົ່ວປະເທດ. (ເພື່ອຊາບ ແລະ ຊ່ວຍຊຸກຍູ້ໃນການຈັດຕັ້ງປະຕິບັດ)
- ກົມຕ່າງໆ ອ້ອມຂ້າງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ເພື່ອປະຕິບັດ)
- ພະແນກຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມແຂວງແລະນະຄອນຫຼວງທົ່ວປະເທດ (ເພື່ອປະຕິບັດ)
- ຫ້ອງການຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມເມືອງທົ່ວປະເທດ (ເພື່ອປະຕິບັດ)